ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

===000===

ກະຊວງສາທາລະນະສຸກ　　　　　　　　　　　　　　　　　　　　　　ເລກທີ 1442/ກຊສ

# ຂໍ້ກຳນົດວ່າດ້ວຍການສ້າງຕັ້ງບໍລິສັດ
# ຂາອອກ-ຂາເຂົ້າຢາ ແລະ ຜະລິດຕະພັນການແພດ

- ອີງຕາມ ກົດໝາຍວ່າດ້ວຍຢາ ແລະ ຜະລິດຕະພັນການແພດ ສະບັບເລກທີ 01/ສພຊ, ລົງວັນທີ 08 ເມສາ 2000.
- ອີງຕາມ ກົດໝາຍທຸລະກິດສະບັບເລກທີ 03/94/ສພຊ, ລົງວັນທີ 18/7/1994.
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງສາທາລະນະສຸກສະບັບເລກທີ 020/ນຍ, ລົງວັນທີ 09 ມີນາ 1999.
- ອີງຕາມ ອີງຕາມການສະເໜີຂອງກົມອາຫານ ແລະ ຢາ ການຄົ້ນຄ້ວາຂອງ ກົມມະຫາພາກ ແລະ ການນຳຂອງກະຊວງສາທາລະນະສຸກ.

**ລັດຖະມົນຕີວ່າການກະຊວງສາທາລະນະສຸກ ຕົກລົງອອກຂໍ້ກຳນົດວ່າດ້ວຍ**
**ການສ້າງຕັ້ງບໍລິສັດ ຂາອອກ-ຂາເຂົ້າ ຢາ ແລະ ຜະລິດຕະພັນການພດດັ່ງນີ້:**

**ມາດຕາ 1: ຈຸດປະສົງ ແລະ ບະດັບຄາດໝາຍ**

1.1. **<u>ຈຸດປະສົງ</u>**: ເພື່ອຄຸ້ມຄອງການເຄື່ອນໄຫວຂອງບໍລິສັດ ຂາອອກ-ຂາເຂົ້າ ດ້ານຢາ ຫລື/ແລະ ຜະລິດຕະພັນການແພດໃຫ້ຖືກຕ້ອງຕາມລະບຽບກົດໝາຍ ແລະ ຫລັກການວິຊາສະເພາະ ແນໃສ່ຮັບປະກັນການບໍລິການດ້ານຢາ ແລະ ຜະລິດຕະພັນການແພດໃຫ້ມີຄຸນນະພາບ, ປະສິດທິພາບ ແລະ ຄວາມເປັນທຳໃຫແກ່ຜູ້ບໍລິໂພກ ແລະ ພ້ອມດຽວກັນນັ້ນ ກໍ່ເພື່ອຊ່ວຍກະຕຸກຊຸກຍູ້ຜູ້ດຳເນີນທຸລະກິດ ໃຫ້ມີປະສິດທິຜົນ.

1.2. **<u>ລະດັບຄາດໝາຍ:</u>**

ເພື່ອປົກປ້ອງຜູ້ບໍລິໂພກໃຫ້ໄດ້ຮັບແຕ່ຢາ ແລະ ຜະລິດຕະພັນການພດທີ່ມີຄຸນນະພາບ, ປະສິດທິພາບ ແລະ ມີຄວາມປອດໄພ, ທັງເປັນການປະກອບສ່ວນເຂົ້າໃນການພັດທະນາ ແລະ ສ້າງສາປະເທດຊາດ.

**ມາດຕາ 2: ນິຍາມ**

2.1. **ຢາ:** ແມ່ນວັດຖຸໜຶ່ງ ຫລື ວັດຖຸປະກອບຫລາຍຢ່າງ ທີ່ອອກລິດ ແລະ ບໍ່ອອກລິດປະສົມເຂົ້າກັນ ທີ່ນຳໃຊ້ສຳລັບການກັນ ແລະ ປິ່ນປົວພະຍາດ, ຊ່ວຍໃນການພິສູດ ແລະ ບົ່ງມະຕິພະຍາດ, ບັນເທົາອາການເຈັບປວດ, ດັດແກ້, ປັບປຸງ, ບຳລຸງ, ຮັກສາ ຫລື ປ່ຽນແປງໜ້າທີ່ການຂອງຮ່າງກາຍ, ຟື້ນຟູສຸຂະພາບກາຍ ແລະ ຈິດຂອງຄົນ.

2.2. **ຢາສາກົນ ຫລື ຢາຫລວງ:** ແມ່ນຜະລິດຕະພັນທີ່ໄດ້ຜ່ານການປຸງແຕ່ງສຳເລັດຮູບຕາມສູດຕຳລາ ແລະ ກຳມະວິທີວິທະຍາສາດ ທີ່ແນ່ນອນ ຊຶ່ງມີການຫຸ້ມຫໍ່ ແລະ ຕິດສະຫລາກ ໃນນັ້ນ, ສ່ວນປະກອບທີ່ອອກລິດ ໄດ້ຖືກດັດແປງ ໃຫ້ເໝາະສົມກັບການນຳໃຊ້ ສຳລັບຄົນ.

2.3. **ຢາພື້ນເມືອງ:** ຢາພື້ນເມືອງ ແມ່ນຢາທີ່ມາຈາກພືດ, ຕົ້ນໄມ້, ແຮ່ທາດ, ສັດ ທີ່ໄດ້ຜ່ານການປຸງແຕ່ງ, ການຫຸ້ມຫໍ່ ແລະ ຕິດສະຫລາກ ໃນນັ້ນ ລັກສະນະ ແລະ ຄວາມແຮງຂອງການອອກລິດ ຍັງບໍ່ທັນໄດ້ ຮັບການພິສູດດ້ວຍວິທະຍາສາດປະຈຸບັນ ແຕ່ຕ້ອງຖືກຮັບຮອງຈາກກະຊວງສາທາລະນະສຸກ.

ຂະແໜງສາທາລະນະສຸກ ຕ້ອງຈັດຕັ້ງການສຳຫລວດ ແລະ ຂຶ້ນບັນຊີບັນດາຕົ້ນໄມ້, ພືດ, ແຮ່ທາດ ແລະ ສັດທີ່ເປັນຢາພື້ນເມືອງ ເພື່ອຄຸ້ມຄອງ

2.4. **ຜະລິດຕະພັນການແພດ:** ຜະລິດຕະພັນການແພດ ແມ່ນວັດຖຸ ຫລື ທາດໃດໜຶ່ງ ທີ່ມີການນຳໃຊ້ເຂົ້າໃນວົງການແພດ ລວມທັງຜະລິດຕະພັນໃດໜຶ່ງທີ່ນຳໃຊ້ໄປໃນສັງຄົມຊຶ່ງສາມາດ ເປັນອັນຕະລາດຕໍ່ສຸຂະພາບຂອງຄົນ ເຊັ່ນ: ອາຫານເສີມການແພດ, ເຄື່ອງສຳອາງ, ຜະລິດຕະພັນເຄມີທີ່ໃຊ້ໃສຄົວເຮືອນ, ຜະລິດຕະພັນການແພດທີ່ໃຊ້ປະຈຳວັນ ຕາມສາລະບານລະອຽດຕິດຄັດ.

2.5. **ການຂາຍຍົກ:** ການຂາຍຍົກຢາ ແລະ ຜະລິດຕະພັນການແພດ ແມ່ນການຂາຍເປັນຈຳນວນຫລາຍ ເພື່ອຈະເອົາໄປຂາຍຍ່ອຍຕໍ່, ໝາຍຄວາມວ່າ ຂາຍຢູ່ໃນລັກສະນະຫົວໜ່ວຍໝັດໜໍ່ເດີມ. ຜູ້ຊື້ແມ່ນຜູ້ເຮັດທຸລະກິດ ເພື່ອຈຸດປະສົງນຳໄປຂາຍຕໍ່ໃຫ້ລູກຄ້າ. ຜູ້ມີສິດຂາຍຍົກແມ່ນບຸກຄົນທີ່ເຮັດບໍລິສັດ ຂາອອກ-ຂາເຂົ້າ ຫລື ສາຂາໂຮງງານຜະລິດຢາ, ສາຂາບໍລິສັດ ຫລື ຕົວແທນຈຳໜ່າຍຂອງບໍລິສັດ ແລະ ບໍລິສັດ ຂາຍຍົກພາຍໃນ.

2.6. **ການຂາຍຍ່ອຍ:** ແມ່ນການຂາຍຈຳນວນບໍ່ຫລາຍ ໝາຍຄວາມວ່າຂາຍຕາມໃບສັ່ງຂອງແພດ ຫລື ຂາຍຕາມຄົນເຈັບ ທີ່ມີຈຸດປະສົງນຳໄປປິ່ນປົວພະຍາດ ຕາມການບົ່ງມະຕິຂອງທ່ານໝໍເທົ່ານັ້ນ, ເຊັ່ນ: ຂາຍເປັນຫລອດ, ເປັນເມັດ, ເປັນແຜງ ຫລື ເປັນແຕະ... ຜູ້ມີສິດຂາຍຍ່ອຍ ແມ່ນຮ້ານຂາຍຍ່ອຍຢາ, ກອງທຶນໝູນວຽນຢາ ຢູ່ໂຮງໝໍ, ສຸກສາລາ ແລະ ຖົງຢາປະຈຳບ້ານ.

2.7. **ການນຳເຂົ້າ:** ແມ່ນການນຳເຂົ້າຢາ ແລະ ຜະລິດຕະພັນການແພດ ມາຈາກຕ່າງປະເທດ, ເພື່ອຈຳໜ່າຍໃຫ້ແກ່ລູກຄ້າພາຍໃນ ໂດຍປະຕິບັດຕາມລະບຽບກົດໝາຍຂອງ ສປປ ລາວ.

2.8. **ການສົ່ງອອກ:** ແມ່ນການນຳເອົາສິນຄ້າສົ່ງອອກຂາຍຕ່າງປະເທດ, ຕາມການສັ່ງຂອງລູກຄ້າຢູ່ຕ່າງປະເທດ ໂດຍປະຕິບັດຕາມລະບຽບກົດໝາຍ ຂອງ ສປປ ລາວ.

2.9. **ບໍລິສັດ:** ແມ່ນຫົວໜ່ວຍທຸລະກິດ ທີ່ດຳເນີນການເຄື່ອນໄຫວການນຳເຂົ້າ, ສົ່ງອອກ ແລະ ຈຳໜ່າຍຢາ ແລະ ຜະລິດຕະພັນການພດ ຊຶ່ງໄດ້ຮັບອະນຸຍາດຈາກກະຊວງສາທາລະນະສຸກ.

2.10. **ສາຂາ ຫລື ຕົວແທນຈຳໜ່າຍ:** ແມ່ນຫົວໜ່ວຍທຸລະກິດຊຶ່ງເປັນຕົວແທນໃຫ້ບໍລິສັດແມ່ນ ຫລື ໂຮງງານໃນການຈຳໜ່າຍຢາ ຫລື ຜະລິດຕະພັນການແພດ.

## ໝວດທີ II
## ການສ້າງຕັ້ງບໍລິສັດຂາອອກ-ຂາເຂົ້າ, ສາຂາ, ຕົວແທນຈຳໜາຍ
## ດ້ານຢາ ແລະ ຜະລິດຕະພັນການແພດ

### ມາດຕາ 3: ເງື່ອນໄຂໃນການສ້າງຕັ້ງ ບໍລິສັດ ຂາອອກ-ຂາເຂົ້າ.

3.1. ຜູ້ມີຈຸດປະສົງດຳເນີນທຸລະກິດການສົ່ງອອກ-ນຳເຂົ້າ ຢາ ແລະ /ຫລື ຜະລິດຕະພັນການແພດ ຢູ່ໃນ ສປປ ລາວ ຕ້ອງປະຕິບັດດັ່ງນີ້:

- ບຸກຄົນຫລື ນິຕິບຸກຄົນ ຈະແມ່ນຄົນລາວ ຫລື ຄົນຕ່າງປະເທດ ທີ່ມີຈຸດປະສົງຢາສ້າງຕັ້ງບໍລິສັດຂາອອກ-ຂາເຂົ້າດ້ານຢາ ແລະ/ຫລື ຜະລິດຕະພັນການແພດ ຕ້ອງປະຕິບັດຕາມກົດໝາຍທຸລະກິດ, ກົດໝາຍແຮງງານ, ກົດໝາຍບັນຊີ, ກົດໝາຍຢາ ແລະ ຜະລິດຕະພັນການພດ ແລະ ບັນດາຂໍ້ກຳນົດຕ່າງໆ ຂອງກະຊວງສາທາລະນະສຸກ.

3.2. ຕ້ອງມີເພສັດຊະກອນທີ່ເປັນຄົນສັນຊາດລາວ ຊຶ່ງມີໃບປະກາດສະນີຍະບັດ ຫລື ໃບຢັ້ງຢືນສຳເລັດ ການສຶກສາວິຊາຊີບເພສັດຊະກຳ ທີ່ອອກໃຫ້ໂດຍ ສະຖານບັນການສຶກສາທີ່ກ່ຽວຂ້ອງ ທັງພາຍໃນ ແລະ ຕ່າງປະເທດ ແລະ ໄດ້ຮັບອະນຸຍາດວິຊາຊີບເພສັດຊະກຳຈາກກະຊວງສາທາລະນະສຸກ ແລະ ຕ້ອງມີປະສົບປະ ການຮັບໃຊ້ວຽກງານການຢາ 05 ປີ ຂຶ້ນໄປ. ຖ້າແມ່ນພະນັກງານສັງກັດລັດຕ້ອງມີໃບແຕ່ງ ຕັ້ງຢ່າງເປັນທາງການ.

3.3. ຕ້ອງແມ່ນຜູ້ທີ່ບໍ່ຢູ່ໃນໄລຍະຖືກດຳເນີນຄະດີ ຫລື ປະລະໜ້າທີ່ ຫລື ຖືກປະຕິບັດວິໄນຍ້ອນການຜິດພາດທາງດ້ານວິຊາຊີບເພສັດຊະກຳ ຫລື ຄ້າຂາຍຢາເສບຕິດ.

3.4. ຕ້ອງມີສຸຂະພາບແຂງແຮງ, ບໍ່ເປັນໂລກຈິດ, ບໍ່ເສຍຢາເສບຕິດ.

### ມາດຕາ 4: ເງື່ອນໄຂ ແລະ ສິ່ງອຳນວຍຄວາມສະດວກທີ່ຈຳເປັນ.

4.1. ບຸກາຄົນ ຫລື ນິຕິບຸກຄົນທີ່ດຳເນີນທຸລະກິດຂາອອກ-ຂາເຂົ້າຢາ ແລະ ຜະລິດຕະພັນການພດ ແມ່ນການຈັດຕັ້ງທີ່ເຮັດຂາອອກ-ຂາເຂົ້າຢາ ແລະ ຜະລິດຕະພັນການແພດໂດຍສະເພາະ, ບໍ່ໃຫ້ປົນເປກັບສິນຄ້າຊະນິດອື່ນ.

4.2. ທຸກລາຍການຢາ ແລະ ຜະລິດຕະພັນການແພດ ທີເປັນຂາເຂົ້າ ຕ້ອງໄດ້ຮັບການກວດກາ, ວິໄຈ (ຖ້າມີຄວາມຈຳເປັນ ແລະ ຢັ້ງຢືນຄຸນນະພາບຈາກກະຊວງສາທາລະນະສຸກ.

4.3. ຢູ່ໃນໃບແນະນຳການນຳໃຊ້ຢາ ທຸກລາຍການຢາ ແລະ ຜະລິດຕະພັນການແພດຕ້ອງໃຫ້ມີພາສາລາວ.

4.4. ບໍລິສັດຂາອອກ-ຂາເຂົ້າຢາ ແລະ ຜະລິດຕະພັນການແພດ ທີ່ຈະໄດ້ຮັບການອະນຸຍາດສ້າງຕັ້ງຂຶ້ນນັ້ນ ແມ່ນໃຫ້ຂຶ້ນກັບແຜນການທີ່ມີການດຸ່ນດ່ຽງຕາມເຂດແຄ້ວນ, ປະຊາກອນ ແລະ ສັດສ່ວນຜະລິດຕະພັນສົ່ງອອກ ຫລາຍກ່ວາການນຳເຂົ້າຈະເປັນບຸລິມະສິດໃນການພິຈາລະນາ.

4.5. ສະຖານທີ່ດຳເນີນທຸລະກິດ ຂາອອກ-ຂາເຂົ້າ, ສາຂາບໍລິສັດ/ໂຮງງານ ແລະ ຕົວແທນຈຳໜ່າຍ ຕ້ອງສະອາດ, ມີເນື້ອທີ່ຢ່າງຕ່ຳ 20 ຕາລາງແມັດຂຶ້ນໄປ, ເປັນຫ້ອງເຮືອນສະເພາະ, ບໍ່ປົນເປສະຖານທີ່ພັກເຊົາ ແລະ ບ່ອນຂາຍເຄື່ອງອື່ນໆ ທີ່ບໍ່ແມ່ນຢາ ແລະ ຕ້ອງມີລະບົບສ້າງເກັບມ້ຽນສິນຄ້າຖືກຕ້ອງຕາມມາດຕະຖານ ເຊັ່ນ: ລະບົບປັບຄວາມເຢັນ, ແສງສະຫວ່າງ, ເຄື່ອງແທກອຸນຫະພູມ, ຄວາມຊຸ່ມ ແລະ ອື່ນໆ

4.6. ປ້າຍບໍລິສັດ, ສາຂາບໍລິສັດ, ຕົວແທນຈຳໜ່າຍ.

ຕ້ອງມີປ້າຍຕິດສະເພາະ ແລະ ຂຽນຈະແຈ້ງຕາມເນື້ອໃນລຸ່ມນີ້:

- ຊື່ບໍລິສັດເປັນພາສາລາວຢູ່ເທິງ ແລະ ພາສາສາກົນຢູ່ກ້ອງ.
- ທີ່ຢູ່, ໂທລະສັບ, ເລກທະບຽນທຸລະກິດ, ຕ້ອງມີເຄື່ອງໝາຍກາງູກ້ຽວຈອກ.
- ປ້າຍພື້ນມີສີຂຽວ, ຂະໜາດກ້ວາງ 80-100 cm, ຍາວ 200-250 cm ໂດຍທົ່ວໄປພາສາລາວ ຕ້ອງໃຫຍ່ກວ່າພາສາສາກົນ ແລະ ຕ້ອງຜ່ານການກວດກາຈາກພະແນກສາທາລະນະສຸກແຂວງ, ນະຄອນຫລວງ ຫລື ເຂດພິເສດ ແລະ ຂະແໜງຖະແຫລງຂ່າວວັດທະນະທຳ.

4.7. ອຸປະກອນຮັບໃຊ້ພາຍໃນບໍລິສັດ, ສາຂາໂຮງງານ/ບໍລິສັດ, ຕົວແທນຈຳໜ່າຍ.

- ຕູ້ແກ້ວເກັບຮັບກສາຢາສຳລັບວາງສະແດງ ແລະ ວາງຂາຍ.
- ຕູ້ສະເພາະ ເພື່ອຮັກສາຢາເບື່ອ ແລະ ຢາເສບຕິດ, ຕູ້ດັ່ງກ່າວ ຕ້ອງແໜ້ນໜາ ແລະ ໃສ່ກະແຈ-ຕູ້ເຢັນທີ່ມີອຸນຫະພູມສູງສຸດບໍ່ໃຫ້ເກີນ 4 ອົງສາ ພ້ອມດ້ວຍເຄື່ອງວັດແທກອຸນຫະພູມ ໃນກໍລະນີທີ່ມີຢາຕ້ອງຮັກສາໄວ້ໃນຄວາມເຢັນ ເຊັ່ນ: ຢາວັກແຊງ, ຢາຍັດທະວານ ຫລື ຢາອື່ນໆ.
- ມີເຄື່ອງບັນຈຸ ແລະ ຫຸ້ມຫໍ່ທີ່ເໝາະສົມ ແລະ ຖືກຕ້ອງຕາມລະບຽບການເພື່ອຮັບປະກັນຄຸນນະພາບ ແລະ ອຸປະກອນອື່ນໆ ທີ່ເຫັນວ່າມີຄວາມຈຳເປັນ.
- ມີລະບົບສາງທີ່ໄດ້ມາດຕະຖານຕາມຫລັກການການຂາຍຢົກທີດີ (GWP).

4.8. ເອກະສານປະຈຳຢູ່ບໍລິສັດ, ສາຂາ ໂຮງງານ/ບໍລິສັດ, ຕົວແທນຈຳໜ່າຍ.

ບໍລິສັດ, ສາຂາໂຮງງານ/ບໍລິສັດ, ຕົວແທນຈຳໜ່າຍຕ້ອງມີເອກະສານປະຈຳເຊັ່ນ:

- ໃບທະບຽນວິຊາຊີບເພສັດຊະກຳ ແລະ ໃບອະນຸຍາດດຳເນີນທຸລະກິດດ້ານຢາໃຫ້ແຂວນໄວ້ໃນຮ້ານບ່ອນ ທີ່ເຫັນໄດ້ງ່າຍ.
- ກົດໝາຍ, ດຳລັດ, ຂໍ້ກຳນົດ, ກົດລະບຽບ ແລະ ແຈ້ງການຕ່າງໆກ່ຽວກັບຢາ.
- ປື້ມຄູ່ມືການນຳໃຊ້ຢາ.
- ປື້ມຕິດຕາມການກວດກາຂອງພະນັກງານກວດກາ.
- ບັນຊີຕິດຕາມຢາພາຍໃນຮ້ານ: ຊື້ເຂົ້າ, ຂາຍອອກ, ຍັງເຫລືອຕົວຈິງພ້ອມດ້ວຍວັນເດືອນປີໝົດອາຍຸ ແລະ ຊຸດຜະລິດ.

- ສຳເນົາໃບບິນຊື້ເຂົ້າ, ຂາຍອອກຂອງຮ້ານທີ່ຖືກຕ້ອງຕາມລະບຽບການ.
- ເອກະສານການນຳເຂົ້າ, ສົ່ງອອກຄືນຊຸດຂອງຢາທີ່ມີໃນຮ້ານ.
- ບັນຊີຄວບຄຸມພິເສດ, ຢາເສບຕິດ ແລະ ຢາອອກລິດຕໍ່ຈິດປະສາດ ແລະ ບັນຊີອື່ນໆ.

4.9. ບໍລິສັດ, ສາຂາໂຮງງານ/ບໍລິສັດ, ຕົວແທນຈຳໜ່າຍ ຕ້ອງມີໂຄງຮ່າງການຈັດຕັ້ງ, ຢ່າງໜ້ອຍປະກອບດ້ວຍ ຫົວໜ້າ ແລະ ຄະນະອຳນວຍການ, ບັນດາພະແນກການທີ່ຈຳເປັນຈຳນວນໜຶ່ງເຊັ່ນ: ບັນຊີການເງິນ, ບັນຊີສາງ, ການຕະຫລາດ ແລະ ອື່ນໆ... ແລະ ຕ້ອງມີກົດລະບຽບການເຄື່ອນໄຫວໂດຍສະເພາະ.

4.10. ສຳລັບການສ້າງຕັ້ງບໍລິສັດຂາຍຍົກພາຍໃນ ໃຫ້ປະຕິບັດຕາມເງື່ອນໄຂການສ້າງຕັ້ງບໍລິສັດຂາອອກ-ຂາເຂົ້າ, ຍົກເວັ້ນຂໍ້ 4.2 ໃນ ມາດຕາ 4 ຂອງຂໍ້ກຳນົດສະບັບນີ້.

**ມາດຕາ 5: ການປະກອບເອກະສານເພື່ອຂໍອະນຸຍາດ ຫລື ຂໍຕໍ່ໃບອະນຸຍາດຂອງຜູ້ເປັນວິຊາການ.**

5.1. ບັນດາເອກະສານເພື່ອປະກອບການຂໍອະນຸຍາດຂອງຜູ້ເປັນວິຊາການ:

1. ໃບຄຳຮ້ອງຂໍອະນຸຍາດວິຊາຊີບເພສັດຊະກຳ.
2. ໃບຊີວະປະຫວັດຫຍໍ້ທີ່ມີຮູບຕິດ (ບໍ່ກາຍ 1 ປີ)
3. ໃບຢັ້ງຢືນສຸຂະພາບ. (ບໍ່ກາຍ 3 ເດືອນ).
4. ໃບຢັ້ງຢືນທີ່ຢູ່ປະຈຸບັນທີ່ມີຮູບ (ບໍ່ກາຍ 3 ເດືອນ)
5. ຮູບຖ່າຍຂະໜາດ 3X4 ຈຳນວນ 03 ໃບ (ບໍ່ກາຍ 1 ປີ).
6. ໃບປະກາຊະນະຍະບັດ.
7. ໃບແຈ້ງໂທດ.
8. ໃບຢັ້ງຢືນການປົດປ່ອຍອອກຈາກລັດຖະການ ຫລື ໃບແຕ່ງຕັ້ງຂອງກົມກອງໃນກໍລະນີທີ່ເປັນລັດວິສາຫະກິດ.
9. ແຜນວາດທີ່ຕັ້ງ ບໍລິສັດ, ສາຂາບໍລິສັດ/ໂຮງງານ, ຕົວແທນຈຳໜ່າຍ.
10. ໃບຢັ້ງຢືນການລົງກວດກາສະຖານທີ່ຂອງເຈົ້າໜ້າທີ່ທີ່ກ່ຽວຂ້ອງກ່ອນການອະນຸຍາດ.

5.2. ການປະກອບເອກສານຂໍຕໍ່ໃບອະນຸຍາດຂອງຜູ້ເປັນວິຊາການ.

1. ໃບອະນຸຍາດທະບຽນວິຊາຊີບເພສັດຊະກຳເກົ່າທີ່ໃກ້ຈະໝົດອາຍຸ ຫລື ໝົດອາຍຸແລ້ວ.
2. ໃບຄຳຮ້ອງຂໍຕໍ່ໃບອະນຸຍາດວິຊາຊີບເພສັດຊະກຳ.
3. ໃບຢັ້ງຢືນສຸຂະພາບ (ບໍ່ກາຍ 3 ເດືອນ)
4. ໃບຢັ້ງຢືນທີ່ຢູ່ປະຈຸບັນຕິດຮູບພ້ອມ (ບໍ່ກາຍ 3 ເດືອນ).
5. ຮູບຖ່າຍຂະຫນາດ 3X4 ຈຳນວນ 03 ໃບ (ບໍ່ກາຍ 1 ປີ).
6. ໃບບັນທຶກການກວດກາສະຖານທີ່ເພື່ອອອກ ແລະ ຕໍ່ໃບທະອະນຸຍາດ.

**ມາດຕາ 6: ການສ້າງຕັ້ງຕົວແທນຈຳໜ່າຍຂອງໂຮງງານ, ບໍລິສັດ ຫລື ສາຂາຂອງຕົນຢູ່ຕ່າງແຂວງ ໂຮງງານ ຫລື ບໍລິສັດ ຕ້ອງປະຕິບັດດັ່ງລຸ່ມນີ້:**

ປະກອບເອກະສານຕາມ 5.1 ຫລື 5.2 ແລ້ວຍື່ນຄຳຮ້ອງເຖິງກະຊວງສາທາລະນະສຸກ ໂດຍຜ່ານພະແນກສາທາລະນະສຸກແຂວງ, ກຳແພງນະຄອນ ຫລື ເຂດພິເສດ (ຂະແໜງອາຫານ ແລະ ຢາ) ທີ່ຕົວແທນຈຳໜ່າຍ ຫລື ສາຂາຈະຕັ້ງຢູ່.

**ມາດຕາ 7: ຜູ້ມີສິດຂາຍຍົກຢາ ແລະ/ຫລື ຜະລິດຕະພັນການແພດ.**

ມີແຕ່ບໍລິສັດຂາອອກ-ຂາເຂົ້າ, ສາຂາບໍລິສັດ ຫລື ສາຂາໂຮງງານຜະລິດຢາ, ຕົວແທນຈຳໜ່າຍ, ໂຮງງານຜະລິດຢາ ແລະ ບໍລິສັດຂາຍຍົກພາຍໃນເທົ່ານັ້ນທີ່ມີສິດຂາຍຢາ ແລະ / ຫລື ຜະລິດຕະພັນການແພດ.

## ໝວດທີ III
## ການອອກໃບອະນຸຍາດວິຊາຊີບເພສັດຊະກຳ
## ແລະ ການປິດການດຳເນີນທຸລະກິດ

**ມາດຕາ 8: ການອອກໃບອະນຸຍາດວິຊາຊີບເພສັດຊະກຳ.**

ຜູ້ມີຈຸດປະສົງຢາກດຳເນີນທຸລະກິດຂາອອກ-ຂາເຂົ້າ, ສາຂາ ຫລື ຕົວແທນຈຳໜ່າຍຢາ ແລະ ຜະລິດຕະພັນການແພດ, ຕ້ອງປະກອບເອກະສານຍື່ນຫ້ອງການສາທາລະນະສຸກເມືອງ (ບ່ອນທີ່ຈະສ້າງຕັ້ງທຸລະກິດ) ເພື່ອກວດກາ ແລະ ມີຄຳເຫັນແລ້ວສົ່ງຕໍ່ພະແນກສາທາລະນະສຸກແຂວງ, ກຳແພງນະຄອນ ຫລື ເຂດພິເສດ ເພື່ອພິຈາລະນາຢ່າງຖີ່ຖ້ວນ ແລະ ຮັດກຸມ ແລ້ວສົ່ງໄປໃຫ້ກົມອາຫານ ແລະ ຢາ, ກະຊວງສາທາລະນະສຸກ ເພື່ອພິຈາລະນາ ອອກໃບອະນຸຍາດທາງດ້ານວິຊາສະເພາະ.
(ໄລຍະເວລາຂອງການຄົ້ນຄ້ວາພິຈາລະນາເອກະສານທັງໝົດຢູ່ຂະແໜງສາທາລະນະສຸກມີກຳນົດ 60 ວັນ).

ໃນກໍລະນີລົງທຶນຂອງຕ່າງປະເທດໃຫ້ປະຕິບັດຕາມ ຂໍ້ຕົກລົງຂອງປະທານຄະນະຄຸ້ມຄອງການລົງທຶນຮ່ວມມືກັບຕ່າງປະເທດ ແລະ ລົງທຶນພາຍໃນວ່າດ້ວຍລະບຽບພິຈາລະນາອະນຸມັດໂຄງການລົງທຶນຕ່າງປະເທດ ສປປ ລາວ ສະບັບເລກທີ 013/ຄລຮ, ລົງວັນທີ 27/02/2002.

ໃບອະນຸຍາດວິຊາຊີບເພສັດຊະກຳມີອາຍຸ 01 ປີ, 03 ເດືອນກ່ອນໝົດອາຍຸຕ້ອງສະເໜີຕໍ່ອາຍຸຄືນໃໝ່.

**ມາດຕາ 9: ການປິດບໍລິສັດ, ສາຂາບໍລິສັດ/ໂຮງງານ, ຕົວແທນຈຳໜ່າຍ.**

ການປິດສາມາດເກີດຂຶ້ນໄດ້ໃນກໍລະນີດັ່ງລຸ່ມນີ້:

- ຜູ້ທີ່ມີຄວາມສະມັກໃຈ ຫລື ຢາກໂຈະຊົ່ວຄາວຍ້ອນເຫດຜົນໃດໜຶ່ງ, ຊຶ່ງກໍລະນີດັ່ງກ່າວຜູ້ກ່ຽວຕ້ອງໄດ້ຍື່ນຄຳຮ້ອງເຖິງຂະແໜງການທີ່ກ່ຽວຂ້ອງເພື່ອພິຈາລະນາ.
- ກໍລະນີທີ່ລະເມີດຕໍ່ລະບຽບກົດໝາຍ ຊຶ່ງເຈົ້າໜ້າທີ່ທາງການເປັນຜູ້ສັ່ງ.

**ມາດຕາ 10: ການຍົກຍ້າຍສະຖານທີ່ຕັ້ງຂອງບໍລິສັດ, ສາຂາ ຫລື ຕົວແທນຈໍາໜ່າຍ.**

ການຂໍຍົກຍ້າຍສະຖານທີ່ຂອງບໍລິສັດ, ສາຂາ ຫລື ຕົວແທນຈໍາໜ່າຍ ຕ້ອງໄດ້ຍື່ນຄໍາຮ້ອງຜ່ານຫ້ອງການສາທາລະນະສຸກເມືອງ, ຂະແໜງອາຫານ ແລະ ຢາ ແຂວງ, ກໍາແພງນະຄອນ ຫລື ເຂດພິເສດເພື່ອມີຄໍາເຫັນ, ຈາກນັ້ນຈຶ່ງຍື່ນມາກົມອາຫານ ແລະ ຢາ ເພື່ອພິຈາລະນາ.

## ໝວດທີ IV
## ການຮັບປະກັນຄຸນນະພາບ

**ມາດຕາ 11: ຢາ ແລະ /ຫລື ຜະລິດຕະພັນການແພດ ທີ່ຈະນໍາເຂົ້າມາຈໍາໜ່າຍໃນ ສ.ປ.ປ. ລາວ** ຕ້ອງໄດ້ຈົດທະບຽນຕາມລະບຽບການ ຢູ່ ກົມອາຫານ ແລະ ຢາ ກະຊວງສາທາລະນະສຸກ.

**ມາດຕາ 12:** ຢາ ແລະ ຜະລິດຕະພັນການແພດ ທີ່ໄດ້ຮັບອະນຸຍາດ ກ່ອນການນໍາເຂົ້າມາຈໍາໜ່າຍຢູ່ ໃນ ສປປ ລາວ ຕ້ອງຖືກກວດກາຈາກເຈົ້າໜ້າທີ່ອາຫານ ແລະ ຢາ ຢູ່ດ່ານທີ່ທາງການອະນຸຍາດ

**ມາດຕາ 13:** ຢາທຸກລາຍການ ທີ່ໄດ້ຈົດທະບຽນແລ້ວ ກ່ອນການຈໍາໜ່າຍ ຕ້ອງໄດ້ຕິດສະແຕມຢ່າງຖືກຕ້ອງຕາມ ລະບຽບການທີ່ກະຊວງສາທາລະນະສຸກກໍານົດອອກ.

## ໝວດທີ V
## ຂໍ້ຫ້າມຕ່າງໆ

**ມາດຕາ 14: ເນື່ອງຈາກວ່າຢາ ເປັນສິນຄ້າພິເສດ ບໍລິສັດ, ສາຂາ ຫລື ຕົວແທນຈໍາໜ່າຍຕ້ອງປະຕິບັດຢ່າງເຂັ້ມງວດຕໍ່ບັນດາຂໍ້ຫ້າມດັ່ງລຸ່ມນີ້:**

14.1. ຫ້າມບຸກຄົນ, ນິຕິບຸກຄົນ ຫລື ອົງການຈັດຕັ້ງໃດໜຶ່ງ ດໍາເນີນທຸລະກິດດ້ານຢາ ແລະ ຜະລິດຕະພັນການແພດ ໂດຍທີ່ບໍ່ໄດ້ຮັບອະນຸຍາດຈາກກົມອາຫານ ແລະ ຢາ ກະຊວງສາທາລະສຸກ.

14.2. ຫ້າມນໍາເຂົ້າ-ສົ່ງອອກ ແລະ ຈໍາໜ່າຍຢາທີ່ບໍ່ໄດ້ຈົດທະບຽນ, ຢາທີ່ບໍ່ໄດ້ຮັບອະນຸຍາດ.

14.3. ຫ້າມຈໍາໜ່າຍຢາທີ່ບໍ່ໄດ້ຕິດສະແຕມ.

14.4. ຫ້າມນຳເຂົ້າ ແລະ ຈຳໜ່າຍຢາຕົກມາດຕະຖານ, ຢາປອມແປງ, ຢາທີ່ມາຈາກແຫລ່ງທີ່ບໍ່ຖືກຕ້ອງ, ຢາຫຸ້ມຫໍ່ບໍ່ຖືກຕ້ອງ(ບໍ່ຖືກຕາມຫົວໜ່ວຍມັດຫໍ່ເດີມ), ຢາໝົດອາຍຸນຳໃຊ້, ຢາເຊື່ອມຄຸນນະພາບ, ຢາຕົວແບບ, ຢາທີ່ທາງການເກືອດຫ້າມທຸກປະເພດ.

14.5. ຫ້າມໂອນ ຫລື ຂາຍໃບອະນຸຍາດວິຊາຊີບເພສັດຊະກຳ.

14.6. ຫ້າມສົ່ງອອກ, ນຳເຂົ້າ, ນຳຜ່ານ ຫລື ຈຳໜ່າຍຢາເສບຕິດ-ວັດຖຸອອກລິດຕໍ່ຈິດປະສາດ, ເຄມີຕົ້ນ ໂດຍບໍ່ໄດ້ຮັບອະນຸຍາດຈາກກະຊວງສາທາລະສຸກ.

## ໝວດທີ່ VI

## ນະໂຍບາຍ ແລະ ມາດຕະການ

**ມາດຕາ 16 ນະໂຍບາຍຕໍ່ຜູ້ທີ່ມີຜົນງານ.**

ບຸກຄົນ ຫລື ນິຕິບຸກຄົນ ທາກດຳເນີນທຸລະກິດຖືກຕ້ອງຕາມລະບຽບການ ຈະຖືກຍ້ອງຍໍຢ່າງເໝາະສົມຈາກພາກສ່ວນທີ່ກ່ຽວຂ້ອງ.

**ມາດຕາ 16: ມາດຕະການຕໍ່ຜູ້ລະເມີດ.**

ຜູ້ທີ່ລະເມີດຕໍ່ຂໍ້ກຳນົດສະບັບນີ້ ຈະໄດ້ຮັບການສຶກສາອົບຮົມ, ກ່າວເຕືອນ, ປັບໄໝ ແລະ ລົງໂທດຕາມກໍລະນີໜັກ ຫລື ເບົາ ດັ່ງລາຍລະອຽດດັ່ງຕໍ່ໄປນີ້:

16.1. ຖ້າມີການກະທຳຜິດ ຫລື ຝ່າຝືນຕໍ່ມາດຕາໃດໜຶ່ງ ຂອງກົດໝາຍສະບັບນີ້ ເຊັ່ນ: ດຳເນີນທຸລະກິດກ່ອນໄດ້ຮັບໃບອະນຸຍາດ, ໃບອະນຸຍາດໝົດອາຍຸ, ດຳເນີນທຸລະກິດ ຢູ່ບ່ອນຫ້າມ ຕາມມາດຕາ 14.1, ນຳເຂົ້າສົ່ງອອກ ຢາທີ່ບໍ່ໄດ້ຈົດທະບຽນ, ຢາທີ່ບໍ່ໄດ້ຮັບອະນຸຍາດນຳເຂົ້າ, ບໍ່ນຳເຂົ້າຢາ ແລະ ຜະລິດຕະພັນການແພດຫລັງຈາກ ໄດ້ຮັບອະນຸຍາດໃຫ້ສ້າງຕັ້ງບໍລິສັດແລ້ວແມ່ນ ຈະຖືກຕັກເຕືອນ ແລະ ໃຫ້ຢຸດເຊົາການເຄື່ອນໄຫວ.

16.2. ຖ້າບຸກຄົນໃດຫາໂອນ, ຂາຍ, ໃຫ້ເຊົ່າໃບອະນຸຍາດວິຊາຊີບ ເພສັດຊະກຳຕາມມາດຕາ 14.5 ຈະຖືກກ່າວເຕືອນ ແລະ ໃຫ້ຢຸດເຊົາການເຄື່ອນໄຫວ.

16.3. ຖ້າມີການນຳເຂົ້າ-ສົ່ງອອກ, ນຳຜ່ານ ຫລື ຈຳໜ່າຍ ແລະ ນຳຢາເສບຕິດ, ເຄມີຕົ້ນ, ທີ່ບໍ່ໄດ້ຮັບອະນຸຍາດຈາກກະຊວງສາທາລະນະສຸກ, ຈະຖືກກ່າວເຕືອນ ຫລື ບໍ່ອະນຸຍາດໃຫ້ດຳເນີນທຸລະກິດ. ຖ້າກໍລະນີຮ້າຍແຮງ ແມ່ນຈະຖືກປະຕິບັດຕາມມາດຕາ 135 ຂອງກົດໝາຍອາຍາສະບັບດັດແກ້ ແລະ ຄຳສັ່ງເລກທີ 14/ນຍ, ລົງວັນທີ 28/11/2000.

16.4. ຖ້າມີການກະທຳຜິດຄັ້ງທີ 01 ເຊັ່ນ: ການນຳເຂົ້າ ຫລື ສົ່ງອອກຢາ ໂດຍບໍ່ຖືກຕ້ອງ, ຂາຍຢາປອມ, ຢາບໍ່ມີຄຸນນະພາບ, ຢາຕ້ອງຫ້າມ, ຢາເບື່ອ, ວັດຖຸອອກລິດຕໍ່ຈິດ ແລະ ປະສາດ, ຢາໝົດອາຍຸ, ຢາເຖື່ອນ,

ຢາບໍ່ຖືກຕາມມາດຕະຖານທີ່ກຳນົດໄວ້ ຈະຖືກກ່າວເຕືອນ, ປັບໄໝ 2 ເທົ່າຕົວຂອງມູນຄ່າທີ່ຂາຍຕາມທ້ອງຕະຫລາດ ແລະ ອາຍັດ ຫລື ຢຶດສິນຄ້າເປັນຂອງລັດ.

16.5. ຖ້າບຸກຄົນໃດຫາກຝ່າຝືນມາດຕາ 16.4 ຄັ້ງທີ່ 2 ຈະຖືກກ່າວເຕືອນ, ປັບໄໝ 4 ເທົ່າຕົວຂອງມູນຄ່າສິນຄ້າທີ່ຂາຍຕາມທ້ອງຕະຫລາດ, ອາຍັດ ຫລື ຢຶດຜະລິດຕະພັນດັ່ງກ່າວເປັນຂອງລັດ. ຖ້າບໍ່ປະຕິບັດຕາມການແນະນຳຂອງເຈົ້າໜ້າທີ່ ຈະຕ້ອງປິດກິດຈະການຊົ່ວຄາວກຳນົດ 01 ປີ.

16.6. ຖ້າບຸກຄົນໃດຫາກຝ່າຝືກມາດຕາ 16.4 ເປັນຄັ້ງທີ່ 3 ຈະຖືກປັບໄໝ 6 ເທົ່າຕົວຂອງມູນຄ່າສິນຄ້າທີ່ຂາຍຢູ່ທ້ອງຕະຫລາດ, ຢຶດສິນຄ້າ, ປິດກິດຈະການຖາວອນ ຫລື ຖືກດຳເນີນຄະດີຕາມກົດໝາຍ.

**ມາດຕາ 17:** ໃນກໍລະນີຮ້າຍແຮງ ເປັນອັນຕະລາຍເຮັດໃຫ້ຜູ້ຊົມໃຊ້ເສຍອົງຄະດ ເສຍຊີວິດ, ເຖິງຈະເປັນການກະທຳຜິດຄັ້ງທີ່ 1, ຄັ້ງທີ 2 ຫລື ຄັ້ງທີ 3 ກໍຕາມ, ເຈົ້າຂອງບໍລິສັດຈະຕ້ອງຖືກປິດກິດຈະການຢ່າງຖາວອນ ແລະ ພ້ອມດຽວກັນນັ້ນຈະຖືກຟ້ອງຂຶ້ນສານເພື່ອດຳເນີນຄະດີ.

## ໝວດທີ VII
## ການຈັດຕັ້ງປະຕິບັດ

ມາດຕາ 18: ມອບໃຫ້ກົມອາຫານ ແລະ ຢາ ຜັນຂະຫຍາຍໃຫ້ເປັນລະອຽດ ແລະ ຈັດຕັ້ງປະຕິບັດຂໍ້ກຳນົດສະບັບນີ້ໂດຍສົມທົບກັບພະແນກສາທາລະນະສຸກແຂວງ, ກຳແພງນະຄອນ ຫລື ເຂດພິເສດ ແລະ ບັນດາຂະແໜງການອື່ນໆທີ່ກ່ຽວຂ້ອງໃນຂອບເຂດທົ່ວປະເທດ.

ທຸກຂໍ້ກຳນົດກົດລະບຽບ, ຄຳສັ່ງແນະນຳທີ່ໄດ້ປະກາດໃຊ້ໃນເມື່ອກ່ອນ ທີ່ຂັດກັບເນື້ອໃນຂອງຂໍ້ກຳນົດສະບັບນີ້ລ້ວນແລ້ວແຕ່ຖືກລົບລ້າງ.

ມາດຕາ 19: ຂໍ້ກຳນົດສະບັບນີ້ມີຜົນບັງຄັບໃຊ້ນັບແຕ່ມືລົງລາຍເຊັນເປັນຕົ້ນໄປ.

ວຽງຈັນ, ວັນທີ 13 ສິງຫາ 2003

ດຣ. ປອນເມກ ດາລາລອຍ

**List I-A MEDICAL DEVICE REQUIRED TO BE REGISTERED**

1. Absorbable Collagen Hemostatic Felt
2. Absorbent Cotton, sterile &non-sterile
3. Arterial Venous Fistula Needle set
4. Bandages with plaster of Paris
5. Elastic bandage
6. Band-aid plastic strip pain pad
7. Bone wax
8. Blood transfusion set Catheters
9. Cervical collar
10. Catheters
11. Collagen
12. Condom
13. Contact lenses (hard and soft and disposable)
14. Corset cast
15. Cosmetic puffs cotton
16. Cotton buds
17. Cotton swabs
18. Dental filling alloy
19. Disposable needles
20. Disposable Skin stapler and staples
21. disposable tissue Measuring device
22. Drainage Pouches
23. Duodenal Tube
24. Earpiercin Device
25. Endotracheal Tube
26. Exchange transfusion tray
27. Feeding tub
28. Filter set
29. Fluor alloy amalgam
30. Gauze pads, sterile
31. Humidifier mask
32. Hypo-allergenic paper tape
33. Implantable staple
34. Infusion administration set
35. Intraocular lenses
36. Intrauterine device (IUD)
37. I.V. Catheter Needles
38. Ligating clip device
39. Lubricating jelly
40. Lumbar Puncture tray
41. Nasal Oxygen Cannula
42. Nebulizer with aerosol mask
43. Orthoplast cervical collar
44. Osteotomy set
45. Oxygen Catheter
46. Oxygen Mask
47. Periodontal Bone grafting Implant
48. Peritoneal Dialysis administration set
49. Plaster
50. Porcine Heart Valve
51. Implantable prostheses
52. Rectal catheter
53. Rectal catheter
54. Rectal tube
55. Rotahalers
56. Scalp Vein Infusion set
57. Scissors skin retractors
58. Skin traction kit
59. Spinal anesthesia tray
60. Stoma bag
61. Stomach tube
62. Suction catheter
63. Surgical blades, disposable
64. Surgical gloves (sterile Unsterile)
65. Sutures
66. Sutures Needles
67. Synthetic Cast Padding
68. Synringes
69. Thermometers
70. Transfusion set
71. Urethral Catheter
72. Urinary Drainage tube
73. Urine Collecting bag

**List1-B DIAGNOSTIC REQUIRED TO BE REGISTERED**

1. HIV Tasting Kits
2. Hepatitis B Testing Kits
3. Blood Typing Seva
4. Hepa C Test Kits

**List II-PRODUCTS THAT ARE NOT REQUIRED TO BE REGISTERED**

1. Plaster bag for blood transfusion
2. Non-sterile surgical facemasks
3. Surgical caps (non-sterile)
4. Tongue Depressors
5. Non-sterile applicator sticks
6. Gauze (in bolts)
7. Anti-embolism stocking
8. Under cast padding
9. Sputum Caps
10. Rubber stoppers
11. Aluminum seals
12. Vials (50,10,5cc)
13. Ampules (50,10ml amber/white)
14. Laboratory Glassware
15. Surgical Instruments (e.g. scissor, forceps, blade-holder, needle-holder, clamps, biopsy punches, retractros, scopes, etc..)
16. Toothbrushes
17. Dental Floss
18. Health Solution
19. Mortuary refrigerator
20. Abdominal Blinder
21. Weighing scale
22. Ice bags
23. Urinal/Receptacles
24. Splints
25. Plaster of Paris
26. Abdominal pads
27. Centrifuges & equipment
28. Anaerobic Generating System
29. X-Ray Films and Chemicals
30. Surgical Face Mask